# ແມ່ນ້ຳໜອງບຶງທີ່ສວຍງາມ ແລະ ນະຄອນຢົ໋ວຢ່າງໃຕ້ລຸ່ມຟ້າ



ນະຄອນຢົ໋ວຢ່າງຍຶດໝັ້ນການພັດທະນາສີຂຽວ, ເນັ້ນໃສ່ການອະນຸລັກສິ່ງແວດລ້ອມ ແລະ ບໍ່ພັດທະນາຢ່າງຂະໜາດໃຫຍ່ ເພື່ອສ້າງເຂດສາທິດດ້ານການພັດທະນາສີຂຽວຕາມແລວທາງເສດຖະກິດແມ່ນ້ຳຢາງເຊກຽງ. ພາບໂດຍ: Xu Dianbo

ໜອງຕຸ້ງຖິງເປັນໜອງລະດັບສຸດຍອດ ແລະ ຕຶກຢົ໋ວຢ່າງທີ່ມີຊື່ສຽງໂດ່ງດັງ.

ນະຄອນຢົ໋ວຢ່າງເຄີຍຖືກເອີ້ນວ່າເປັນ “ເມືອງປ່າລິງ” ໃນສະໄໝບູຮານ ແລະຖືເປັນ “ປະຕູທາງພາກເໜືອຂອງແຂວງຫູໜານ”, ເປັນຕົວເມືອງໃຈກາງຂອງພາກພື້ນລະດັບຊາດ ແລະ ຕົວເມືອງໃຈກາງລະດັບຮອງແຂວງ, ມີປະຫວັດສາດທີ່ເກົ່າແກ່ ແລະ ຮຸ່ງເຮືອງມາເປັນເວລາ 2.500 ກວ່າປີ, ມີພູຜາທີ່ມີຊື່ສຽງ, ໜອງທີ່ມີຊື່ສຽງ, ຕຶກ (ອາຄານ) ບູຮານທີ່ມີຊື່ສຽງ ແລະ ບົດຄວາມບູຮານທີ່ມີຊື່ສຽງ, ນະຄອນຢົ໋ວຢ່າງມີແຫຼ່ງທ່ອງທ່ຽວທຳມະຊາດ 193 ແຫ່ງ ແລະ ໂຄງການທີ່ເປັນຕົວແທນໃຫ້ແກ່ມໍລະດົກວັດທະນະທຳນາມມະທຳລະດັບຊາດ 9 ຢ່າງ, ເຄີຍໄດ້ຮັບນາມມະຍົດເປັນຕົວເມືອງສີວິໄລທົ່ວປະເທດ, ຕົວເມືອງອະນາໄມລະດັບຊາດ, ຕົວເມືອງສວນລະດັບຊາດ, 10 ຕົວເມືອງທີ່ສວຍງາມຂອງຈີນ ແລະ ອື່ນໆ.

ແມ່ນ້ຳຢາງເຊກຽງໄດ້ໄຫຼຜ່ານນະຄອນຢົ໋ວຢ່າງ ແລະ ໜອງຕຸ້ງຖິງທີ່ມີຊື່ສຽງກໍໄດ້ຕັ້ງຢູ່ນີ້ ເຊິ່ງເຮັດໃຫ້ນະຄອນຢົ໋ວຢ່າງມີທິວທັດທຳມະຊາດ ສາຍນ້ຳທີ່ສວຍສົດງົດງາມ; ຄຳສັບ “ທຽນເຊັຍຢົ໋ວຢ່າງ” ແປວ່າ “ນະຄອນຢົ໋ວຢ່າງໃຕ້ລຸ່ມຟ້າ” ມາຈາກປະໂຫຍກ “ເປັນຫ່ວງເປັນໃຍຕໍ່ບ້ານເມືອງກ່ອນປະຊາຊົນ ແລະ ມ່ວນຊື່ນຕາມຫຼັງປະຊາຊົນ” ໃນບົດຄວາມ “ຕຶກຢົ໋ວຢ່າງ” ທີ່ມີຊື່ສຽງສືບທອດມາເປັນເວລາພັນກວ່າປີ ເຊິ່ງໄດ້ສະແດງໃຫ້ເຫັນເຖິງພາບພົດຂອງນະຄອນຢົ໋ວຢ່າງ. ຕຶກຢົ໋ວຢ່າງກໍຖືກເອີ້ນວ່າເປັນ “ຕຶກອັນດັບໜຶ່ງຂອງໂລກ”, ເປັນໜຶ່ງໃນສິບຕຶກວັດທະນະທຳປະຫວັດສາດ, ໜຶ່ງໃນສີ່ຕຶກທີ່ມີຊື່ສຽງ ແລະ ໜຶ່ງໃນສາມຕຶກທີ່ມີຊື່ສຽງຢູ່ພາກໃຕ້ແມ່ນ້ຳຢາງເຊກຽງຂອງຈີນ, ກໍແມ່ນໜຶ່ງໃນພາບພົດຕົວເມືອງທີ່ສຳຄັນຂອງນະຄອນຢົ໋ວຢ່າງ.

ນະຄອນຢົ໋ວຢ່າງໄດ້ຍຶດໝັ້ນຊຸກຍູ້ການພັດທະນາແບບເຊື່ອມໂຍງເຂົ້າກັນລະຫວ່າງຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ. ໃນຫຼາຍປີມານີ້, ນະຄອນຢົ໋ວຢ່າງໄດ້ຈັດກິດຈະກຳຕ່າງໆ ເຊັ່ນ: ລະດູການປະມົງໜອງຕຸ້ງຖິງ, ເທດສະການຊົມນົກສາກົນ, ມາລາທອນຢົ໋ວຢ່າງ ແລະ ອື່ນໆ ເຊິ່ງໄດ້ຮັບຄວາມນິຍົມຊົມຊອບຈາກຄົນທັງຫຼາຍ. ນົກອົບພະຍົບທີ່ບິນເຈີດໄປມາ, ປາໂລມາ, ກວາງອູດ ແລະ ໝີແພນດາທີ່ໜ້າຮັກ ໄດ້ເຮັດໃຫ້ນະຄອນຢົ໋ວຢ່າງມີຊື່ສຽງນັບມື້ນັບໂດ່ງດັງ. ຢູ່ນະຄອນຢົ໋ວຢ່າງ, ວັດທະນະທຳ ແລະ ອຸດສາຫະກຳໄດ້ພັດທະນາແບບຊ່ວຍຊູຍູ້ໜູນກັນ ເຊິ່ງໄດ້ຊຸກຍູ້ໃຫ້ການທ່ອງທ່ຽວວັດທະນະທຳຂອງນະຄອນຢົ໋ວຢ່າງໄດ້ພັດທະນາຢ່າງວ່ອງໄວດ້ວຍຄຸນນະພາບສູງ.

ກອງປະຊຸມພັດທະນາການທ່ອງທ່ຽວແຂວງຫູໜານຄັ້ງທີ 4 ຈະຈັດຂຶ້ນແຕ່ວັນທີ 24-26 ພຶດສະພາ 2025 ທີ່ນະຄອນຢົ໋ວຢ່າງ. ນະຄອນຢົ໋ວຢ່າງໄດ້ຂຸດຄົ້ນຄວາມມີສະເໜ່ທີ່ມີເອກະລັກພິເສດຂອງແມ່ນ້ຳລຳເຊ, ໜອງ, ຕຶກ ແລະ ແຫຼ່ງທ່ອງທ່ຽວພາຍໃນນະຄອນຢົ໋ວຢ່າງ ເພື່ອສ້າງເປັນຍີ່ຫໍ້ການທ່ອງທ່ຽວວັດທະນະທຳທີ່ມີຫົວຂໍ້ວ່າ: “ແມ່ນ້ຳໜອງບຶງທີ່ສວຍງາມ ແລະ ນະຄອນຢົ໋ວຢ່າງໃຕ້ລຸ່ມຟ້າ” ໂດຍເນັ້ນໃສ່ລະບົບນິເວດທີ່ດີງາມ, ມີວັດທະນະທຳທີ່ເຂັ້ມຂຸ້ນ ແລະ ເປັນແບບສາກົນ ເພື່ອສ້າງເປັນຈຸດເຕີບໂຕດ້ານການທ່ອງທ່ຽວຂອງແຂວງຫູໜານ ແລະ ຈຸດໝາຍປາຍທາງການທ່ອງທ່ຽວທີ່ມີຊື່ສຽງລະດັບໂລກ.

ແມ່ນ້ຳໜອງບຶງທີ່ສວຍງາມ ແລະ ນະຄອນຢົ໋ວຢ່າງໃຕ້ລຸ່ມຟ້າ. ນະຄອນຢົ໋ວຢ່າງທີ່ເປັນເມືອງເກົ່າທີ່ມີປະຫວັດສາດພັນປີ ພວມມຸ່ງໜ້າໄປສູ່ໂລກ ດ້ວຍທ່າທີທີ່ເປີດກວ້າງເຊິ່ງບໍ່ພຽງແຕ່ເຮັດໃຫ້ນັກທ່ອງທ່ຽວໂລກຮັບຮູ້ເຖິງທິວທັດ ແມ່ນ້ຳໜອງບຶງຂອງຈີນເທົ່ານັ້ນ, ຫາກຍັງເຮັດໃຫ້ພວກເຂົາເຈົ້າຮັບຮູ້ເຖິງຈິດໃຈເປັນຫ່ວງເປັນໃຍຕໍ່ບ້ານເມືອງ ແລະ ວັດທະນະທຳທີ່ເປັນມູນເຊື້ອຂອງຈີນອີກດ້ວຍ.



ທິວທັດໜອງຕຸ້ງຖິງທີ່ສວຍງາມ ແລະ ຕຶກຢົ໋ວຢ່າງທີ່ຕັ້ງຢູ່ແຄມໜອງຕຸ້ງຖິງຢ່າງສະຫງ່າຜ່າເຜີຍ. ພາບໂດຍ: Xu Dianbo



ປາໂລມາເປັນສັດສະຫງວນລະດັບໜຶ່ງຂອງຈີນ. ປັດຈຸບັນ, ຈຳນວນປາໂລມາໃນໜອງຕຸ້ງຖິງມີຫຼາຍກວ່າ 160 ໂຕ. ພາບໂດຍ: Xu Dianbo



ນະຄອນຢົ໋ວຢ່າງສ້າງຊາຍຝັ່ງແມ່ນ້ຳຢາງເຊກຽງທີ່ສວຍງາມທີ່ສຸດ, “ທາງເດີນເຮືອຄຳ” ຕາມແມ່ນ້ຳຢາງເຊກຽງທີ່ຍາວ 163 ກິໂລແມັດໄດ້ເປັນມິດຕໍ່ສິ່ງແວດລ້ອມນິເວດທີ່ສຸດ.



ເທດສະການເລົ່ານິທານສາງເລີນີ້ໂລ ທີ່ເປັນມໍລະດົກວັດທະນະທຳນາມມະທຳແຫ່ງຊາດຈີນໄດ້ຈັດຂຶ້ນຢູ່ນະຄອນຢົ໋ວຢ່າງ ເຊິ່ງໄດ້ດຶງດູດນັກທ່ອງທ່ຽວຈາກທ້ອງຖິ່ນຕ່າງໆຂອງຈີນເຂົ້າຊົມ. ພາບໂດຍ: Xu Dianbo



ສວນໝີແພນດານະຄອນຢົ໋ວຢ່າງມີໝີແພນດາ 10 ໂຕ, ເປັນສວນສາທິດເນັ້ນໃສ່ຫົວຂໍ້ໝີແພນດາທີ່ຄົ້ນຄວ້າໃຫ້ມະນຸດ ແລະ ທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນ ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມສີວິໄລດ້ານນິເວດຂອງນະຄອນຢົ໋ວຢ່າງ. ພາບໂດຍ: Xu Dianbo



ຄຽງຄູ່ກັບສິ່ງແວດລ້ອມນິເວດໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຕໍ່ເນື່ອງ, ຈຳນວນກວາງອູດປ່າຂອງນະຄອນຢົ໋ວຢ່າງໄດ້ເພີ່ມຂຶ້ນເປັນ 260 ກວ່າໂຕ. ພາບໂດຍ: Zhao Min